ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 001/ປປທ

ນະຄອນຫຼວງວຽງຈັນ, ວັນທີ 26 ມັງກອນ 2024

# ລັດຖະບັນຍັດ

## ວ່າດ້ວຍການປັບປຸງບາງມາດຕາຂອງ ລັດຖະບັນຍັດວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ສະບັບເລກທີ 002/ປປທ, ລົງວັນທີ 17 ມິຖຸນາ 2021 ຂົງເຂດການຕ່າງປະເທດ

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 63/ສພຊ, ລົງວັນທີ 8 ທັນວາ 2015;
- ອີງຕາມ ລັດຖະບັນຍັດວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ສະບັບເລກທີ 002/ປປທ, ລົງວັນທີ 17 ມິຖຸນາ 2021 (ມາດຕາ 59);
- ອີງຕາມ ມະຕິຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 305/ຄປຈ, ລົງວັນທີ 6 ຕຸລາ 2023;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 32/ຄປຈ, ລົງວັນທີ 9 ຕຸລາ 2023.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະບັນຍັດ:**

**ມາດຕາ 1 ຈຸດປະສົງ**

ລັດຖະບັນຍັດສະບັບນີ້ ກຳນົດການປັບປຸງມາດຕາ 51 ແລະ 52 ຂອງລັດຖະບັນຍັດວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ສະບັບເລກທີ 002/ປປທ, ລົງວັນທີ 17 ມິຖຸນາ 2021 ກ່ຽວກັບຄ່າທຳນຽມ ແລະ ຄ່າບໍລິການ ຂົງເຂດການຕ່າງປະເທດ ເພື່ອໃຫ້ມີງົບປະມານພຽງພໍໃນການຊຳລະ ຄ່າ ໃຊ້ຈ່າຍຊື້ ແລະ ບຳລຸງອຸປະກອນ ແລະ ຄ່າບໍລິການພິມໜັງສືຜ່ານແດນ ໃຫ້ມີຄຸນນະພາບ ສາມາດສະໜອງຄວາມຕ້ອງການໃຫ້ປະຊາຊົນຢ່າງພຽງພໍ ປະກອບສ່ວນ ເກັບລາຍຮັບເຂົ້າງົບປະມານແຫ່ງລັດ ແລະ ພັດທະນາເສດຖະກິດ-ສັງຄົມ ຂອງຊາດ.

**ມາດຕາ 2 ມາດຕາ ຂອງລັດຖະບັນຍັດ ທີ່ມີການປັບປຸງ**

ມາດຕາ ທີ່ມີການປັບປຸງເນື້ອໃນ ມີ ດັ່ງນີ້:

1. **ມາດຕາ 51 ຄ່າທຳນຽມ**

   ຄ່າທຳນຽມ ຂະແໜງການຕ່າງປະເທດ ໃຫ້ຈັດເກັບ ຕາມອັດຕາ ດັ່ງນີ້:

| ລ/ດ | ເນື້ອໃນລາຍການ | ອັດຕາ/ຫົວໜ່ວຍ |
|---|---|---|
| 1) | ຄ່າທຳນຽມ ຢູ່ ພາຍໃນປະເທດ | |
| 1 | ໜັງສືຜ່ານແດນ | |
| 1.1 | ໜັງສືຜ່ານແດນ ທີ່ບໍ່ແມ່ນເອເລັກໂຕຣນິກ | 10 ໂດລາສະຫະລັດ/ຫົວ |
| 1.2 | ໜັງສືຜ່ານແດນ ເອເລັກໂຕຣນິກ | 10 ໂດລາສະຫະລັດ/ຫົວ |
| 2 | ວີຊາເຂົ້າ-ອອກຫຼາຍເທື່ອ ສຳລັບພົນລະເມືອງຕ່າງປະເທດ ຢູ່ ສປປ ລາວ | |
| 2.1 | ວີຊາເຂົ້າ-ອອກ ຫຼາຍເທື່ອ ໄລຍະ 3 ເດືອນ | 300.000 ກີບ/ເທື່ອ |
| 2.2 | ວີຊາເຂົ້າ-ອອກ ຫຼາຍເທື່ອ ໄລຍະ 6 ເດືອນ | 600.000 ກີບ/ເທື່ອ |
| 2.3 | ວີຊາເຂົ້າ-ອອກ ຫຼາຍເທື່ອ ໄລຍະ 12 ເດືອນ | 1.200.000 ກີບ/ເທື່ອ |
| 3 | ວີຊາກັບດ່ານສາກົນທົ່ວປະເທດ ສຳລັບພົນລະເມືອງຕ່າງປະເທດ | 40 ໂດລາສະຫະລັດ/ຄົນ/ເທື່ອ |
| 4 | ວີຊາອອນລາຍ (e-Visa) ເຂົ້າ ສປປ ລາວ ສຳລັບພົນລະເມືອງຕ່າງປະເທດ | 35 ໂດລາສະຫະລັດ/ຄົນ/ເທື່ອ |
| 5 | ວີຊາກັບດ່ານສາກົນ ແລະ ວີຊາອອນລາຍ (e-Visa) ເຂົ້າ ສປປ ລາວ ສຳລັບພົນລະເມືອງຫວຽດນາມ ແລະ ຈີນ | 20 ໂດລາສະຫະລັດ/ຄົນ/ເທື່ອ |
| ລ/ດ | ເນື້ອໃນລາຍການ | ອັດຕາ/ຫົວໜ່ວຍ |
| 2) | ຄ່າທຳນຽມ ຢູ່ ຕ່າງປະເທດ | |
| 1 | ບັດກົງສຸນໃຫ້ພົນລະເມືອງລາວ | 10 ໂດລາສະຫະລັດ/ຄົນ/ຫົວ |
| 2 | ຕໍ່ອາຍຸນຳໃຊ້ບັດກົງສຸນໃຫ້ພົນລະເມືອງລາວ | 10 ໂດລາສະຫະລັດ/ຄົນ/ຫົວ |
| 3 | ເອກະສານເດີນທາງຊົ່ວຄາວໃຫ້ພົນລະເມືອງລາວກັບຄືນປະເທດ | 10 ໂດລາສະຫະລັດ/ຄົນ/ຫົວ |
| 4 | ເອກະສານຢັ້ງຢືນ ແລະ ຢັ້ງຢືນເອກະສານທາງກົງສຸນ | 10 ໂດລາສະຫະລັດ/ຄົນ/ເທື່ອ |
| 5 | ວີຊາເຂົ້າ ສປປ ລາວ ສຳລັບພົນລະເມືອງຕ່າງປະເທດ | 35 ໂດລາສະຫະລັດ/ຄົນ/ເທື່ອ |
| 6 | ວີຊາເຂົ້າ ສປປ ລາວ ສຳລັບພົນລະເມືອງຫວຽດນາມ | 20 ໂດລາສະຫະລັດ/ຄົນ/ເທື່ອ |
| 7 | ວີຊາເຂົ້າ ສປປ ລາວ ສຳລັບພົນລະເມືອງຈີນ | 15 ໂດລາສະຫະລັດ/ຄົນ/ເທື່ອ |

2. **ມາດຕາ 52 ຄ່າບໍລິການ**

ຄ່າບໍລິການ ຂະແໜງການຕ່າງປະເທດ ໃຫ້ຈັດເກັບ ຕາມອັດຕາ ດັ່ງນີ້:

| ລ/ດ | ເນື້ອໃນລາຍການ | ອັດຕາ/ຫົວໜ່ວຍ |
|---|---|---|
| 1) | ຄ່າບໍລິການຕ່າງໆ ຢູ່ ກົມກົງສຸນ ກະຊວງການຕ່າງປະເທດ | |
| 1 | ອອກໜັງສືຜ່ານແດນ | |
| 1.1 | ອອກໜັງສືຜ່ານແດນ ທີ່ບໍ່ແມ່ນເອເລັກໂຕຣນິກ (ແບບພິມໜັງສືຜ່ານແດນ ທີ່ບໍ່ແມ່ນເອເລັກໂຕຣນິກ ແລະ ຄ່າສະຕິກເກີວີຊາ) | 30 ໂດລາສະຫະລັດ/ຫົວ/ໃບ |
| 1.2 | ອອກໜັງສືຜ່ານແດນ ເອເລັກໂຕຣນິກ (ແບບພິມໜັງສືຜ່ານແດນ ເອເລັກໂຕຣນິກ ແລະ ຄ່າສະຕິກເກີວີຊາ) | 50 ໂດລາສະຫະລັດ/ຫົວ/ໃບ |
| 2 | ອອກໜັງສືຜ່ານແດນດ່ວນ | |
| 2.1 | ອອກໜັງສືຜ່ານແດນດ່ວນ ພາຍໃນ 1 ວັນ | 1.000.000 ກີບ/ຫົວ |
| 2.2 | ອອກໜັງສືຜ່ານແດນດ່ວນ ພາຍໃນ 3 ວັນ | 500.000 ກີບ/ຫົວ |
| 2.3 | ອອກໜັງສືຜ່ານແດນດ່ວນ ພາຍໃນ 5 ວັນ | 300.000 ກີບ/ຫົວ |

| | | |
|---|---|---|
| 3 | ອອກໜັງສືອະນຸຍາດສຳລັບວີຊາກັບດ່ານສາກົນ | 10.000 ກີບ/ຄົນ |
| 4 | ອອກໜັງສືຂໍບັດພັກເຊົາຊົ່ວຄາວ | 20.000 ກີບ/ຄົນ |
| 5 | ອອກໜັງສືຂໍຕໍ່ບັດພັກເຊົາຊົ່ວຄາວ | 20.000 ກີບ/ຄົນ |
| 6 | ອອກວີຊາເຂົ້າ-ອອກຫຼາຍເທື່ອໃຫ້ຊ່ຽວຊານຕ່າງປະເທດ | 50.000 ກີບ/ຄົນ |
| 7 | ສົ່ງໂທລະສານອະນຸມັດວີຊາ ເຖິງສຳນັກງານຜູ້ຕາງໜ້າ ແຫ່ງ ສປປ ລາວ ປະຈຳຢູ່ ຕ່າງປະເທດ | 50.000 ກີບ/ສະບັບ |
| 8 | ວີຊາອອນລາຍ (e-Visa) | 1-3 ໂດລາສະຫະລັດ |
| 9 | ຢັ້ງຢືນເອກະສານທາງກົງສຸນ ສຳລັບນິຕິບຸກຄົນ ແລະ ພົນລະເມືອງລາວ | 30.000 ກີບ/ສະບັບ |
| 10 | ຢັ້ງຢືນເອກະສານທາງກົງສຸນ ສຳລັບນິຕິບຸກຄົນ ແລະ ພົນລະເມືອງຕ່າງປະເທດ | 100.000 ກີບ/ສະບັບ |
| 2) | ຄ່າບໍລິການ ສຳນັກງານຜູ້ຕາງໜ້າ ແຫ່ງ ສປປ ລາວ ປະຈຳ ຢູ່ຕ່າງປະເທດ | |
| 1 | ອອກບັດກົງສຸນໃຫ້ພົນລະເມືອງລາວ | 5 ໂດລາສະຫະລັດ/ຄົນ/ເທື່ອ |
| 2 | ຕໍ່ອາຍຸນຳໃຊ້ບັດກົງສຸນໃຫ້ພົນລະເມືອງລາວ | 5 ໂດລາສະຫະລັດ/ຄົນ/ເທື່ອ |
| 3 | ຢັ້ງຢືນເອກະສານທາງກົງສຸນ ສຳລັບນິຕິບຸກຄົນ ແລະ ພົນລະເມືອງຕ່າງປະເທດ | 10 ໂດລາສະຫະລັດ/ຄົນ/ເທື່ອ |

ການເກັບຄ່າທຳນຽມ ແລະ ຄ່າບໍລິການ ແມ່ນເກັບເປັນເງິນກີບ ຕາມອັດຕາແລກປ່ຽນປະຈຳວັນ ທີ່ທະນາຄານທຸລະກິດຂອງລັດ ກຳນົດ ໂດຍກະຊວງການເງິນ ເປັນຜູ້ແຈ້ງ ແລະ ກຳນົດ ເອົາອັດຕາແລກປ່ຽນ ຂອງທະນາຄານທຸລະກິດໃດໜຶ່ງ ເພື່ອນຳໃຊ້ເປັນບ່ອນອີງໃນການເກັບແຕ່ລະໄລຍະ.

ການຄຸ້ມຄອງ ແລະ ນຳໃຊ້ງົບປະມານທີ່ເກັບຈາກຄ່າທຳນຽມ ແລະ ຄ່າບໍລິການ ຕ້ອງປະຕິບັດຕາມກົດໝາຍວ່າດ້ວຍງົບປະມານແຫ່ງລັດ (ມາດຕາ 6 ແລະ ມາດຕາ 10) ແລະ ລັດຖະບັນຍັດວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ສະບັບເລກທີ 002/ປປທ, ລົງວັນທີ 17 ມິຖຸນາ 2021 (ມາດຕາ 54).

**ມາດຕາ 3 ການປ່ຽນແທນເນື້ອໃນບາງມາດຕາຂອງລັດຖະບັນຍັດ**

ລັດຖະບັນຍັດສະບັບນີ້ ປ່ຽນແທນເນື້ອໃນ ມາດຕາ 51 ແລະ 52 ຂອງລັດຖະບັນຍັດວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ສະບັບເລກທີ 002/ປປທ, ລົງວັນທີ 17 ມິຖຸນາ 2021.

**ມາດຕາ 4 ການຈັດຕັ້ງປະຕິບັດ**

ລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດລັດຖະບັນຍັດສະບັບນີ້.

**ມາດຕາ 5 ຜົນສັກສິດ**

ລັດຖະບັນຍັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນ ປະທານປະເທດ ລົງລາຍເຊັນ ເປັນຕົ້ນໄປ.

ປະທານປະເທດ ແຫ່ງ ສປປ ລາວ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ★ ປະທານປະເທດ ★

ທອງລຸນ ສີສຸລິດ